ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບູລີ

ເລກທີ 1366 /ຈຂ.ຊຍ
ໄຊຍະບູລີ, ວັນທີ ໒໒ ພະຈິກ 2022

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III ໝວດ IV ມາດຕາ 20 ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍ ຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007 ແລະ ອີງຕາມ ດຳລັດ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ສະບັບເລກທີ 267/ລບ, ລົງວັນທີ 5 ສິງຫາ 2014;
- ອີງຕາມ ຄຳສັ່ງ ວ່າດ້ວຍການຂຶ້ນບັນຊີເກົ້າໂຮມຊັບສິນ ທີ່ສານຕັດສິນຮິບເປັນຂອງລັດ ສະບັບເລກທີ 07/ນຍ, ລົງວັນທີ 05 ເມສາ 2017, ຄຳສັ່ງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ສະບັບເລກທີ 1594/ປກສລົງວັນທີ 14 ສິງຫາ 2020;
- ອີງຕາມ ມະຕິ ຂອງກອງປະຊຸມສະພາປະຊາຊົນແຂວງ ໄຊຍະບູລີ ສະບັບເລກທີ 101/ສພຂ.ຊຍ, ລົງວັນທີ 7 ພະຈິກ 2022.

## ເຈົ້າແຂວງ ໄຊຍະບູລີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ການຄຸ້ມຄອງ, ນຳໃຊ້ເງິນກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຄວບຄຸມສະກັດກັ້ນ ລວມທັງການປິ່ນປົວ ຟື້ນຟູສຸຂະພາບ ແລະ ຝຶກວິຊາຊີບເບື້ອງຕົ້ນໃຫ້ແກ່ຜູ້ຕິດຢາເສບຕິດ, ແນ່ໃສ່ເຮັດໃຫ້ສັງຄົມພາຍໃນແຂວງ ໄຊຍະບູລີ ປອດຢາເສບຕິດ, ພົນລະເມືອງບັນດາເຜົ່າ ມີສຸຂະພາບແຂງແຮງ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາ ເສດຖະກິດສັງຄົມຂອງແຂວງໄຊຍະບູລີ.

**ມາດຕາ 2 ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ**

ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແມ່ນການລວບລວມແຫຼ່ງລາຍຮັບ ເພື່ອມານໍາໃຊ້ຈັດຕັ້ງປະຕິບັດ ແລະ ພັນຂະຫຍາຍ ກ່ຽວກັບເຄື່ອນໄຫວວຽກງານ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ.

- ການຄວບຄຸມຢາເສບຕິດ ແມ່ນ ການກໍາຈັດບໍ່ໃຫ້ບັນຫາຢາເສບຕິດແຜ່ລາມອອກໄປເປັນວົງກວ້າງ;
- ການສະກັດກັ້ນຢາເສບຕິດ ແມ່ນ ການເຄື່ອນໄຫວທີ່ອ້າງເງື່ອນໄຂກີດຂວາງຈໍາກັດ, ກີດກັນບໍ່ໃຫ້ມີການເຄື່ອນໄຫວທາງລັບ, ຄຸກຄາມສ້າງຜົນສະທ້ອນເພີ່ມເຕີມແຜ່ລາມ;
- ການຕ້ານຢາເສບຕິດ ແມ່ນ ການເຄື່ອນໄຫວຂັດຂວາງ, ສູ້ຍັນ ແລະ ຕອບໂຕ້ກ່ຽວກັບບັນຫາການກະທໍາທີ່ບໍ່ມີຄວາມຖືກຕ້ອງ ລະເມີດລະບຽບກົດໝາຍ.

**ມາດຕາ 3 ອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຄວບຄຸມຢາເສບຕິດ** ໝາຍເຖິງ ການຄຸ້ມຄອງ, ການຈໍາກັດການຜະລິດ, ການປຸງແຕ່ງສານເສບຕິດ;
2. **ການສະກັດກັ້ນ** ໝາຍເຖິງ ການປ້ອງກັນບໍ່ໃຫ້ຢາເສບຕິດ ມີຢູ່ໃນແຂວງ ໄຊຍະບູລີ;
3. **ການຕ້ານຢາເສບຕິດ** ໝາຍເຖິງ ການປາບປາມຢາເສບຕິດ, ເກືອດຫ້າມ, ລວມທັງການແກ້ໄຂຜົນຮ້າຍຈາກຢາເສບຕິດ;
4. **ສູນປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ** ໝາຍເຖິງ ບ່ອນປາບັດປິ່ນປົວຜູ້ເສບຢາເສຕິດເພື່ອໃຫ້ອອກຈາກຢາເສບຕິດພ້ອມທັງມີການຝຶກວິຊາອາຊີບ;
5. **ຢາເສບຕິດ** ໝາຍເຖິງ ສານກະຕຸ້ນ ຫຼື ສານລະງັບປະສາດ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ;
2. ນໍາໃຊ້ໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
3. ເປີດເຜີຍ, ໂປ່ງໃສ ແລະ ສາມາດກວດສອບໄດ້;
4. ຮັບປະກັນການຕິດຕາມກວດກາ, ຕີລາຄາ, ສະຫຼຸບ ແລະ ລາຍງານເປັນປົກກະຕິ;

**ມາດຕາ 5 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນກັບວຽກງານ ຄວບຄຸມການສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນແຂວງ ໄຊຍະບູລີ.

**ມາດຕາ 6 ການຮ່ວມມືສາກົນ**

ແຂວງ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບຕ່າງປະເທດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ, ຂ່າວສານ, ຍົກລະດັບທາງດ້ານວິຊາສະເພາະ ກ່ຽວກັບວຽກງານຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດໃຫ້ມີປະສິດທິຜົນ ແລະ ການຊ່ວຍເຫຼືອຂອງຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

**ມາດຕາ 7 ແຫຼ່ງລາຍຮັບກອງທຶນ**

ລາຍຮັບຂອງກອງທຶນ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແມ່ນ ໄດ້ມາຈາກແຫຼ່ງ ດັ່ງນີ້:

1. ງົບປະມານຂອງລັດ;

ການຕັດສິນຂອງສານ ກ່ຽວກັບຄະດີຢາເສບຕິດ ແລະ ພາຫະນະ, ວັດຖຸສິ່ງຂອງ ທີ່ບຸກຄົນ, ນິຕິບຸກຄົນທີ່ກະທຳຜິດກ່ຽວກັບຢາເສບຕິດແລ້ວເອົາຕົວລົບໜີ.

2. ພົນທະຜູ້ຖືກບຳບັດ, ກິດຈະກຳ, ຜະລິດຕະພັນ, ການຊ່ວຍເຫຼືອຂອງສັງຄົມ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;

**ມາດຕາ 8 ເປົ້າໝາຍການນຳໃຊ້ກອງທຶນ**

ການນຳໃຊ້ກອງທຶນ ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການປະເມີນຕີລາຄາຊັບສິນ ກ່ຽວກັບຢາເສບຕິດ;
2. ໂຄສະນາເຜີຍແຜ່ນິຕິກຳ ກ່ຽວກັບຢາເສບຕິດ;
3. ການດຳເນີນຄະດີກ່ຽວກັບຢາເສບຕິດ;
4. ການທຳລາຍຢາເສບຕິດ;
5. ວຽກງານອະໄພຍະໂທດ;
6. ປັບປຸງພື້ນຖານໂຄງລ່າງ ສູນບຳບັດຢາເສບຕິດ ແລະ ປິ່ນປົວຟື້ນຟູສຸຂະພາບ.

**ມາດຕາ 9 ການນຳໃຊ້ກອງທຶນ**

ເງິນກອງທຶນ ທີ່ໄດ້ມາຈາກການປະຕິບັດຄຳຕັດສິນຂອງສານ ກ່ຽວກັບການປະຕິບັດໂທດຄະດີ ທີ່ພົວພັນກັບການຄ້າ-ຂາຍ ຢາເສບຕິດ 30% ແບ່ງເຂົ້າງົບປະມານຂັ້ນແຂວງ, 10% ມອບເຂົ້າກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນສູນກາງ, 60% ມອບເຂົ້າກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນແຂວງ.

ສຳລັບ 60% ທີ່ໄດ້ມອບເຂົ້າກອງທຶນ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນແຂວງ ມາຕີເປັນ 100% ແລ້ວແບ່ງໃຫ້ແຕ່ລະຂະແໜງການນຳໃຊ້ ດັ່ງນີ້:

1. **ກອງບັນຊາການ ປກສ ແຂວງ** ນຳໃຊ້ 85%;
2. **ສານປະຊາຊົນ ແຂວງ** ນຳໃຊ້ 5%;
3. **ອົງການໄອຍະການ ປະຊາຊົນ ແຂວງ** ນຳໃຊ້ 5%;
4. **ພະແນກຍຸຕິທຳ ແຂວງ** ນຳໃຊ້ 5%.

ສຳລັບ ສູນບຳບັດ ຢາເສບຕິດ ຂອງແຂວງ ໄຊຍະບູລີ ແມ່ນ ນຳໃຊ້ເງິນກອງທຶນ ສ່ວນແບ່ງຂອງກອງບັນຊາການ ປກສ ແຂວງ.

## ໝວດທີ 3
## ຄະນະກຳມະການຄຸ້ມຄອງກອງທຶນ

**ມາດຕາ 10 ຄະນະກຳມະການຄຸ້ມຄອງກອງທຶນ**

ຄະນະກຳມະການຄຸ້ມຄອງກອງທຶນ ປະກອບມີ ດັ່ງນີ້:

1. ທ່ານ ຮອງ ເຈົ້າແຂວງ ເປັນປະທານ;
2. ທ່ານ ຮອງຫົວໜ້າ ກອງບັນຊາການ ປກສ ແຂວງ ເປັນຮອງປະທານ;
3. ທ່ານ ຮອງຫົວໜ້າ ພະແນກຍຸຕິທຳ ແຂວງ ເປັນກຳມະການ;
4. ທ່ານ ຮອງຫົວໜ້າ ອົງການໄອຍະການປະຊາຊົນ ແຂວງ ເປັນກຳມະການ;
5. ທ່ານ ຮອງປະທານ ສານປະຊາຊົນ ແຂວງ ເປັນກຳມະການ;
6. ທ່ານ ຮອງຫົວໜ້າ ພະແນກສາທາລະນະສຸກ ແຂວງ ເປັນກຳມະການ;
7. ທ່ານ ຮອງຫົວໜ້າ ພະແນກການເງິນ ແຂວງ ເປັນກຳມະການ;
8. ທ່ານ ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນ ແຂວງ ເປັນກຳມະການ;
9. ທ່ານ ຮອງຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ ເປັນກຳມະການ.

**ມາດຕາ 11 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງກອງທຶນ**

ຄະນະກຳມະການຄຸ້ມຄອງກອງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ນິຕິກຳ, ສຶກສາອົບຮົມ, ສ້າງຈິດສຳນຶກ ໃຫ້ທົ່ວສັງຄົມຮັບຮູ້ ແລະ ເຂົ້າໃຈ;
2. ພິຈາລະນາ ແຜນງົບປະມານ ແລະ ແຜນການເຄື່ອນໄຫວວຽກງານ;
3. ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
4. ຄຸ້ມຄອງຕິດຕາມ, ກວດກາການເຄື່ອນໄຫວ, ການນຳໃຊ້ກອງທຶນ.

**ມາດຕາ 12 ກອງເລຂາ ກອງທຶນ**

ກອງເລຂາ ກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ປະກອບມີ ດັ່ງນີ້:

1. ທ່ານ ຫົວໜ້າ ຫ້ອງຕຳຫຼວດ ປກສ ແຂວງ ເປັນຫົວໜ້າ;
2. ທ່ານ ຮອງຫົວໜ້າ ຫ້ອງການກອງບັນຊາການ ປກສ ແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າ ຫ້ອງພະລາທິການ ປກສ ແຂວງ ເປັນຄະນະ;
4. ທ່ານ ຫົວໜ້າ ຂະແໜງຄຸ້ມຄອງຊັບສິນຂອງລັດ ພະແນກການເງິນ ແຂວງ ເປັນຄະນະ;
5. ທ່ານ ຫົວໜ້າ ຂະແໜງບໍລິຫານ ສານປະຊາຊົນ ແຂວງ ເປັນຄະນະ;
6. ທ່ານ ຫົວໜ້າ ຂະແໜງບໍລິຫານ ອົງການໄອຍະການປະຊາຊົນ ແຂວງ ເປັນຄະນະ;
7. ທ່ານ ຫົວໜ້າ ຂະແໜງບໍລິຫານ ພະແນກຍຸຕິທຳ ແຂວງ ເປັນຄະນະ;
8. ທ່ານ ຫົວໜ້າ ພະແນກຕຳຫຼວດ ກວດກາ ແລະ ຄວບຄຸມຢາເສບຕິດ ເປັນຄະນະ;
9. ທ່ານ ຫົວໜ້າ ພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບຕິດ ເປັນຄະນະ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນ**

ກອງເລຂາກອງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງແຜນການ-ແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານ;
2. ຄຸ້ມຄອງບໍລິຫານ ວຽກງານ ແລະ ການເງິນ;
3. ບັນທຶກ, ລາຍຮັບ-ລາຍຈ່າຍ ທີ່ໄດ້ຈາກແຫຼ່ງລາຍຮັບຕ່າງໆ;
4. ເບີກຈ່າຍເງິນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການ;
5. ສະເໜີຈັດກອງປະຊຸມສະຫຼຸບຖອດຖອນ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານກອງທຶນ;
6. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະຄຸ້ມຄອງກອງທຶນ ຮັບຊາບຢ່າງເປັນປົກກະຕິ;
7. ປະຕິບັດ ສິດ ແລະ ໜ້າທີ່ ອື່ນໆ ຕາມການມອບໝາຍ.

## ໝວດທີ 4
## ການກວດກາ ກອງທຶນ

**ມາດຕາ 14 ການກວດກາ**

ການກວດກາວຽກງານກອງທຶນ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ປະກອບມີ:

- ການກວດກາ ໂດຍກອງບັນຊາການ ປກສ ແຂວງ ເປັນການກວດກາພາຍໃນ;
- ການກວດກາ ໂດຍສະພາປະຊາຊົນ ແຂວງ, ອົງການກວດກາລັດ ແຂວງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຊຶ່ງເປັນການກວດກາພາຍນອກ;

**ມາດຕາ 15 ເນື້ອໃນການກວດກາ**

ການກວດກາວຽກງານກອງທຶນ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ກວດກາເນື້ອໃນ ດັ່ງນີ້:

- ກວດກາການເຄື່ອນໄຫວ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງຄະນະກຳມະການຄຸ້ມຄອງກອງທຶນ;
- ກວດກາການເຄື່ອນໄຫວ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງກອງເລຂາ;
- ກວດກາການຄຸ້ມຄອງ ແລະ ນຳໃຊ້ກອງທຶນ ຂອງແຕ່ລະພາກສ່ວນ.

**ມາດຕາ 16 ຮູບການກວດກາ**

ການກວດກາກອງທຶນ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ມີຮູບການ ດັ່ງນີ້:

- ກວດກາຕາມແຜນປົກກະຕິ;
- ກວດການອກແຜນ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
- ກວດກາແບບກະທັນຫັນ.

## ໝວດທີ 5
## ການກວດສອບບັນຊີ, ການລາຍງານ ແລະ ລະບອບປະຊຸມ

**ມາດຕາ 17 ການກວດສອບບັນຊີ**

ການນຳໃຊ້ເງິນກອງທຶນ ຂອງແຕ່ລະພາກສ່ວນ ຕ້ອງມີລະບົບບັນຊີທີ່ຖືກຕ້ອງຕາມກົດໝາຍ ແລະ ຕາມການຕົກລົງຂອງຄະນະຄຸ້ມຄອງ, ການກວດສອບບັນຊີ ຕ້ອງໄດ້ຮັບການກວດຕາມລະບຽບຫຼັກການ ຊຶ່ງດຳເນີນໂດຍອົງການທີ່ຮັບຜິດຊອບ.

**ມາດຕາ 18 ການລາຍງານ**

ກອງເລຂາ ຕ້ອງລາຍງານການເຄື່ອນໄຫວວຽກງານຂອງກອງທຶນ ໃຫ້ປະທານຄະນະຄຸ້ມຄອງກອງທຶນ ຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ອົງການປົກຄອງແຂວງ ປະຈຳ 6 ເດືອນ ແລະ 1 ປີ.

**ມາດຕາ 19 ລະບອບປະຊຸມ**

ກອງປະຊຸມຂອງຄະນະຄຸ້ມຄອງກອງທຶນ ຈັດຂຶ້ນປີລະຄັ້ງ ເພື່ອສະຫຼຸບຕີລາຄາການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ແລະ ວາງທິດທາງແຜນການໃນຕໍ່ໜ້າ. ກໍລະນີ ມີບັນຫາຮີບດ່ວນ, ສຳຄັນ, ຈຳເປັນທີ່ຈະຕ້ອງໄດ້ພິຈາລະນາ ກໍ່ສາມາດເປີດກອງປະຊຸມວິສາມັນຂຶ້ນ ຕາມການສະເໜີຂອງກອງເລຂາ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ເຂົ້າໃນວຽກງານກອງທຶນຄວບຄຸມສະກັດກັ້ນ ແລະ ຕ້ານຢາເສບຕິດ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

**ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຈະຖືກລົງໂທດ ທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກອງບັນຊາການ ປກສ ແຂວງ ໄຊຍະບູລີ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທຸກອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມ ຈົ່ງຮັບຮູ້ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງ ລັດຖະການ ສິບຫ້າວັນ.

ຂໍ້ຕົກລົງ ສະບັບນີ້ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 286/ຈຂ.ຊຍ, ລົງວັນທີ 21 ມີນາ 2019.

**ເຈົ້າແຂວງ**

ພົງສະຫວັນ ສິດທະວົງ